ລາວສຶກສາ ໑ Lao Studies I
An International Conference
DeKalb, IL USA 2005

ວັນທີ 24 ກຸມພາ 2005

ຮຽນທ່ານຜູ້ມີກຽດທີ່ນັບຖື,

ພວກຂ້າພະເຈົ້າ ຄະນະກັມມະການກອງປະຊຸມນາໆຊາດ ເຣື່ອງ ລາວສຶກສາ ຄັ້ງທີ ໑, ອົງການຮ່ວມພັທນາປະຊາຄົມລາວ ແຫ່ງເມືອງ Richmond ຣັຖ California ແລະ ສູນກາງເອເຊັຍອາຄະເນສຶກສາແຫ່ງ ມຫາວິທະຍາລັຍ Northern Illinois ຂໍຮຽນມາຍັງພໍ່ແມ່ ພີ່ນ້ອງ ແລະ ເພື່ອນມິດທັງຫຼາຍເພື່ອຂໍທຶນສົມທົບອຸປຖັມພ໌ ກອງປະຊຸມ “ລາວສຶກສາ” ທີ່ຈະຈັດຂຶ້ນໃນຄັ້ງນີ້. ຄະນະກັມມະການໄດ້ຄາດຄະເນວ່າການ ໃຊ້ຈ່າຍທັງໝົດລວມ ທັງການນຳເອົານັກວິຊາການຕ່າງປະເທດໄປຮ່ວມ ຈະຕົກເປັນເງິນປະມານ $20,000. ອີກຢ່າງນຶ່ງຄ່າທຳນຽມລົງ ທະບຽນ ຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມຈະບໍ່ ພຽງພໍໃນການໃຊ້ຈ່າຍສຳລັບກອງປະຊຸມນີ້.

ກອງປະຊຸມ “ລາວສຶກສາ” ຄັ້ງທີ ໑ ຈະໄດ້ຈັດຂຶ້ນທີ່ ມຫາວິທະຍາລັຍ Northern Illinois, ວັນສຸກ ວັນທີ 20 ເຖິງ ວັນອາທິດ ວັນທີ 22 ເດືອນພຶສພາ ປີ 2005 ທີ່ເມືອງ DeKalb ຣັຖ Illinois ສະຫາຣັຖອາເມຣິກາ. ຈຸດປະສົງຕົ້ນຕໍຂອງການປະຊຸມແມ່ນສ້າງເວທີສາກົນໃຫ້ແກ່ ນັກປຣາດ, ບັນດິດວິທະຍາ ແລະ ນັກວິຊາການ ໄດ້ມີໂອກາດເຕົ້າໂຮມ, ສເນີ, ສົນທະນາ, ປຶກສາ, ແລກປ່ຽນ ແລະ ຮຽນຮູ້ປະເດັນຕ່າງໆກ່ຽວກັບ ລາວ. ລາຍການປະຊຸມຈະມີການປາຖະກະຖາທາງ ວິທະຍາການ ກ່ຽວກັບລາວ ເຊັ່ນ ການສຶກສາກ່ຽວກັບຊົນຊາດຊົນເຜົ່າຕ່າງໆໃນປະເທດລາວ, ລາວພາກອີສານ ແລະ ຊົນເຜົ່າ ລາວ/ໄຕ ກຸ່ມອື່ນໆທີ່ອາໃສຢູ່ໃນ ປະເທດໄທຍ໌, ຊົນເຜົ່ານ້ອຍຊຶ່ງອາໃສຢູ່ຕາມຊາຍແດນລາວ ແລະ ໄທຍ໌, ວຽດນາມ, ຈີນ, ພະມ້າ ແລະ ກຳປູເຈັຽ ເຊັ່ນ ເຜົ່າອາຄາ, ມົ້ງ, ຂະມຸ, ມຽນ, ລາວພວນ, ໄທລື້, ໄທໃຫຍ່ ແລະ ໄທດຳ ເປັນຕົ້ນ ແລະ ຊາວລາວ ຕ່າງແດນ ເຊັ່ນ ລາວ-ອາເມຣິກັນ, ມົ້ງ-ອາເມຣິກັນ ແລະ ລາວ-ຝຣັ່ງ. ນອກຈາກນັ້ນພວກເຮົາຍັງມີລາຍການພິເສດ ເຊັ່ນງານວາງສະແດງ ພາບຈິດຕະກັມ ໂດຍນັກສິລປະຫຼາຍໆທ່ານ, ງານສາຍຮູບເງົາ ຫຼື ພາບພະຍົນ ກ່ຽວກັບເມືອງລາວ ແລະ ຊາວລາວຕ່າງແດນ ແລະ ງານສັງສັນ ຣາຕຣີສະໂມສອນຊຶ່ງຈະຈັດຂຶ້ນໂດຍປະຊາຄົມ ລາວ-ອາເມຣິກັນ ທີ່ເມືອງ Elgin ຣັຖ Illinois.

ພໍຄິດວ່າຈະຈັດກອງປະຊຸມ “ລາວສຶກສາ” ຂຶ້ນ ປະກົດວ່າບຸກຄົນທີ່ໃຫ້ຄວາມສົນໃຈຕໍ່ກອງປະຊຸມຄັ້ງປະຖົມະເລີກນີ້ມີຈຳນວນສູງເກີນຄາດໝາຍ. ກອງປະຊຸມນີ້ບໍ່ພຽງແຕ່ຈະດຶງເອົານັກປຣາດ ຈາກທຸກມູມໂລກເທົ່ານັ້ນ ແຕ່ຍັງເປັນໂອກາດເຕົ້າໂຮມ ຄົນລາວຈາກທົ່ວທິດ ຜູ້ຢາກຟື້ນຟູຈິດສຳນຶກ ທາງວັທນະທັມ ແລະ ພາສາຂອງຕົນ ແລະ ຂອງລູກຫຼານໃນອານາຄົດດ້ວຍ. ກຸ່ມນັກປຣາດລຸ້ນໃໝ່ພ້ອມທັງຜູ້ເຖົ້າອາວຸໂສ ຜູ້ສະຫຼຽວສະຫຼາດ ລຸ້ນເກົ່າ ຕ່າງກໍປະສົງຢາກໃຫ້ກອງປະຊຸມນີ້ເກີດຂຶ້ນ. ດັ່ງຕົວຢ່າງ ຄຳໃຫ້ການຢ່າງເປັນກຳລັງໃຈຈາກອາດິດຄຣູສອນ ຢູ່ຣັຖ Florida ມາທາງອິນເຕີເນັທ໌ ແລະ ຢ້ຳມາທາງໂທຣະສັບວ່າເພິ່ນໄດ້ຕິດຕໍ່ເພື່ອນຝູງຫຼາຍໆຄົນຢູ່ເມືອງ Elgin ວ່າເພິ່ນດີໃຈທີ່ ມີໂອກາດຈະໄດ້ໄປພົບ ເພື່ອນເກົ່າທັງຫຼາຍ ໃນເດືອນພຶສພານີ້ ເພື່ອມາຟັງ ແລະ ສົນທະນາເຣື່ອງທີ່ເຫັນວ່າໜ້າສົນໃຈ ແລະ ທີ່ມີຄວາມສຳຄັນຕໍ່ພວກເຮົາທຸກຄົນ.

ນັກປັນຍາຊົນທີ່ສົນໃຈ ທີ່ຈະເຂົ້າຮ່ວມກອງປະຊຸມກໍມີ 200 ກວ່າຄົນແລ້ວ ແລະ ນັກບັນລະຍາຍທີ່ຖືກເຊີນໄປຮ່ວມກໍມີຫລາຍພໍສົມຄວນ ເຊັ່ນ ທ່ານ ສາສດາຈານ ດຣ. Grant Evans ຈາກ ຮົງກົງ, ພຣະມະຫາອາຈາຣບຸນກອງ ປະທານ ອົງການສົງຄ໌ ລາວ-ອາເມຣະກັນ ຈາກຣັຖ Hawaii, ນັກພາສາສາດ ສາສດາຈານ ດຣ. ສົມຊົງ ບຸຣຸພັດ ຈາກເມືອງໄທຍ໌, ທ່ານ ສາສດາຈານ ດຣ. ຢັງ ດາວ ນັກວິຊາການ ມົ້ງ-ອາເມຣິກັນ ຈາກຣັຖ Minnesota ແລະ ເຈົ້າ ນິຖາໂຄງ ສົມສະນິດ ຈາກປະເທດຝຣັ່ງເສດ ທີ່ຈະເປັນແຂກກິຕິມະສັກດ໌ເພື່ອບັນລະຍາຍ ແລະ ວາງສະແດງຈິດຕະກັມ

ຕໍ່າແຜ່ນ ຂອງອິນໂດຈີນ ແລະ ແສ່ວໄໝຄໍາ ຊຶ່ງເປັນສີລປະລາວດັ້ງເດີມຈາກ ຣາຊສໍານັກຫຼວງພຣະບາງສະໄໝ ພຣະຣາຊອານາຈັກລາວ. ນອກຈາກນັ້ນ ສຖານທູດອາເມຣິກັນປະຈໍາລາວຍັງໄດ້ຮັບປາກວ່າຈະສປອນເຊີນັກວິຊາການ ໔ ທ່ານ ຈາກ ສປປ. ລາວ ໄປຮ່ວມນໍາດ້ວຍ.

ເມືອງລາວໃນປະຈຸບັນເຖິງແມ່ນວ່າຈະເປັນປະເທດນ້ອຍ ແຕ່ກໍອຸດົມສົມບູນຮັ່ງມີດ້ວຍສີລປະວັທນະທັມ. ເວລາການ ລໍຄອຍ ໂອກາດທີ່ຈະຈັດການປະຊຸມມາດຕະຖານແບບນີ້ ໄດ້ມາເຖິງແລ້ວ. ກອງປະຊຸມ "ລາວສຶກສາ" ຈະປະສົບຄວາມສໍາເຣັດໄດ້ກໍຍ້ອນຄວາມອຸປຖັມພ໌ຄໍ້າຊູ ຈາກທ່ານ. ສະນັ້ນຄະນະກັມມະການ "ລາວສຶກສາ" ຫວັງຢ່າງຍິ່ງວ່າທ່ານເອງພ້ອມທັງຮ້ານຄ້າທຸຣະກິດ ແລະ ອົງການຈັດຕັ້ງຕ່າງໆ ຈະຊ່ວຍໃຫ້ຄວາມອຸປຖັມພ໌ເພື່ອໃຫ້ກອງປະຊຸມນີ້ສໍາເຣັດຜົນ ແລະ ລຸລ່ວງໄປດ້ວຍດີ. ພວກເຮົາເຊື່ອແນ່ວ່າການຊ່ວຍເຫຼືອ ຂອງບັນດາທ່ານຈະເປັນປັຈຈັຍອັນລໍ້າຄ່າເພື່ອເຊີດຊູຄວາມທະນົງອົງອາດ ຂອງຄົນລາວ ແລະ ນໍຣະດົກລາວດ້ວຍ.

ທ່ານສາມາດເບິ່ງລາຍລະອຽດ ແລະ ຂໍ້ມູນຕ່າງໆ ຂອງການປະຊຸມ "ລາວສຶກສາ" ໄດ້ທີ່: **www.seasite.niu.edu/lao/LaoStudies** ຫຼືຕິດຕໍ່ໄປຍັງ ທີ່ຢູ່, ໂທຣະສັບ ແລະ ອີເມລ ຂ້າງລຸ່ມນີ້.

ຮຽນມາດ້ວຍຄວາມນັບຖື ແລະ ຮັກແພງ,



ທ. ວິນຍາ ສາຍສມຸດ
ຕ່າງໜ້າ ຄະນະກັມມະການ
ການປະຊຸມນາໆຊາດ ເຣື່ອງ ລາວສຶກສາ ຄັ້ງທີ ໑

NIU Organizers
Carol Compton
Greg Green
John Hartmann
Julie Lamb
Catherine Raymond

San Francisco Bay Area Organizers
Steve Arounsack
Tina Arounsack
Maly Jong
Khammany Mathavongsy
Toni Philadeng
Phoumy Sayavong
Phaeng Toommaly-Andersen
Hongvilay Thongsamouth

National Organizers
Laty Keodouangsy
Pom Outama Khampradith
Toon Phapphayboun
Buasawan Simmala

Endorsers
Prany Sananikone—Director of Diversity Relations and Educational Programs, University of California at Irvine, California
Mana Southichack—Founder, LaoEcon Organization, Hawaii
Bounheng Inversin—President, Lao American Women Association, Washington D.C.
Amphone Vannalom—President, Laotian Humanitarian Foundation

List of potential participants as of February 24, 2005 is 240 people. The list contains many scholars from various states of the United States as well as abroad, such as Lao PDR, Thailand, France, Germany, the Netherlands, Singapore, Vietnam, Austria, India, Taiwan, Hong Kong, China, Nigeria, Argentina, Sweden, Philippines, Belgium and the United Kingdom. For an updated list please visit the ICLS webpage at: www.seasite.niu.edu/lao/LaoStudies

Lao Studies Conference • c/o Vinya Sysamouth • PO Box 410874
San Francisco, CA 94141-0874 • USA
Phone: 1-415-401-6255 • Email: laolanxang@yahoo.com